# ພາສາບອກຊາດ

ໃນການຢູ່ຮ່ວມກັນ ຄົງຈະຫາຄວາມສັມພັນທີ່ແໜ້ນແຟ້ນທີ່ແທງກ້າອັນໃດ ໃຫ້ເຫນືອກວ່າຄວາມສັມພັນທາງດ້ານພາສາໄດ້ຍາກ ເພາະວ່າ ພາສາ ແລະ ອິດທິພົນຂອງການພົວພັນຕ່າງໆຂອງມັນ ເປັນພື້ນຖານໃນການກຳເນີດຂອງຄົນກຸ່ມນຶ່ງຫລືຂອງຊົນເຜົ່ານຶ່ງ ທີ່ໄຕ່ຕໍ່ໄປຫາຄວາມເປັນຊາດ ຂອງຊົນຈຳພວກດັ່ງກ່າວ

ການທີ່ມີພາສາ ແລະ ການທີ່ມີກຳລັງຊັພຍາກອນມະນຸດອັນສົມຄວນ ພາໃຫ້ຊົນເຜົ່າເຫລົ່ານີ້ ຂຍາຍຕົວອອກໄປເລື້ອຍໆ ຕາມພາກພື້ນ ແລະພູມລຳເນົາຕ່າງໆ ອັນເປັນບໍ່ເກີດຂອງຄວາມໄຝ່ຝັນເຖິງ ຄວາມເປັນຊາດ ສຳລັບຊົນເຜົ່າທີ່ຍັງບໍ່ມີປະເທດເທື່ອ ແລະ ເປັນບໍ່ເກີດແຫ່ງການແຊກແຊງ ແລະ ການຍຶດຄອງ ເພື່ອກືນກິນປະເທດອື່ນ ຊຶ່ງສ່ວນມາກແມ່ນປະເທດໃກ້ຄຽງ

ຕາມພາກໃຕ້ປະເທດຈີນ ແລະ ພາກເຫນືອຂອງວຽດນາມ ກໍມີຄົນລາວຊາວໄທຈຳນວນອັນຫລວງຫລາຍ ແຕ່ພວກດັ່ງກ່າວພາກັນໃຊ້ ພາສາການຂີດຂຽນ ແຕກຕ່າງກັນເກືອບຫມົດເລີຍ ຈົນກາຍເປັນກົງກັນຂ້າມກັບຊົນເຜົ່າມົ້ງຕ່າງໆ (ແມ້ວ) ທີ່ພາກັນໃຊ້ພາສາຂີດຂຽນແບບດຽວກັນຈົນຫມົດ ອັນສະແດງເຖິງຄວາມສາມັກຄີທີ່ເຂັ້ມແຂງທີ່ສຸດຂອງຊົນເຜົ່າມົ້ງຕ່າງໆ ທີ່ຍັງຂາດພຽງແຕ່ ຄວາມເປັນຊາດ ຫລືວ່າ ປະເທດ-ຊາດ ແລະ ຢ່າງຕໍ່າສຸດພວກເຂົາຍັງຂາດການປົກຄອງຕົນເອງ (autonomie) ຊຶ່ງຄວາມສາມັກຄີແບບນີ້ ຄົນລາວຊາວໄທຕ່າງໆບໍ່ສາມາດເຮັດໄດ້ !

ໃນທ່າມກາງການເສື່ອມສູນຄວາມເປັນລາວໃນປັດຈຸບັນ ແລະ ເພື່ອສ້າງຄວາມສາມັກຄີທີ່ແນໃສ່ຜົນປໂຍດອັນຍາວນານຂອງຊາວລາວທຸກຄົນ (ຂອງຊາດ ຫລືຂອງຄວາມເປັນລາວ) ແລະເພື່ອສ້າງໃຫ້ຄົນລາວໂດຍທົ່ວໄປໃນໂລກນີ້ນຶກຄິດໄປໃນທຳນອງດຽວກັນວ່າ « ເຮົາເປັນຄົນລາວຢ່າງດຽວ » ຈະຢູ່ແຫ່ງຫົນຕຳບົນໃດກໍດີ ແລະ ເພື່ອເວັ້ນຈາກການນຶກຄິດ « ທ້ອງຖິ່ນ » ໂດຍບໍ່ມີການຈຳແນກ ລາວເຫນືອລາວໃຕ້ ລາວເມືອງຫລວງ ຫລື ລາວຈຳປາສັກ ດັ່ງທີ່ເຮົາເຄີຍໄດ້ເຫັນມາແລ້ວໃນທຳນອງດຽວກັນກັບ ຄົນລາວທີ່ຢູ່ພາກອີສານຂອງໄທຍ໌ ຊຶ່ງ ຄົນລາວເອງ ເຄີຍເວົ້າວ່າພວກເຂົາເຈົ້າ ບໍ່ແມ່ນຄົນລາວ ທັງໆທີ່ພວກເຂົາກໍເປັນຄົນລາວ ເຫມືອນດັ່ງດຽວກັນກັບພວກຕົນຢູ່ແລ້ວ ຊຶ່ງ ໃນປັດຈຸບັນນີ້ ຄົນລາວອົພຍົບທັງຫລາຍ ຖືກຄົນລາວເຮົາເອງຮ້ອງພວກຕົນວ່າຕົນບໍ່ແມ່ນຄົນລາວ ແລະ ຍິ່ງໄປກວ່ານັ້ນວ່າ ຕົນບໍ່ເປັນຮອດຄົນລາວຕື່ມຊອກຊໍ້າ ... ແບ່ງ ຈຳນວນຄົນລາວເຮົາເອງ ໃຫ້ນ້ອຍລົງໄປເລື້ອຍໆ

ສະນັ້ນ ຂ້າພະເຈົ້າ ຂໍຮຽກຮ້ອງໃນນາມສ່ວນຕົວມາຍັງບັນດາທ່ານທຸກຄົນທີ່ຮັກຫອມຄວາມ

ເມື່ອວັນທີ ໑໓-໐໙-໒໐໐໗ ເດືອນ ກັນຍາ ພ.ສ. ໒໕໕໐ ແຫ່ງເມືອງ ປາຣີສ໌

# ພາສາບອກຊາດ

ເປັນລາວ ແລະ ຜູ່ທີ່ຮັກຄົນລາວດ້ວຍກັນ ໃຫ້ພຍາຍາມຊ່ວຍກັນຕາມຄວາມສາມາດ:

- ແປປຶ້ມຕ່າງໆເປັນພາສາລາວ ແລະ ສົ່ງເສີມລູກໃຫ້ຂຽນ Thèses ກ່ຽວກັບລາວ
- ແປສັບເທັກນິດ ແລະ ວິທຍາສາດ ຕ່າງໆ ເປັນພາສາລາວ « ເລຂສັບ (Lexiques)[໑] »
- ບັນທຶກຄຳສັບລາວຕ່າງໆໄວ້ (ຄຳລາວແທ້)
- Scan ເອກສານ ແລະ ປຶ້ມຕ່າງໆທີ່ເປັນພາສາລາວ ເພື່ອແຈກຜ່ານ ອິນເທັແນັດ
- ບັນທຶກຄວາມຫມາຍຂອງສັບ ຫມໍລາວ ຫລື ພຍາດ ທີ່ເປັນຄຳລາວ ດັ່ງ ເຈັບສຽບ ຯລຯ
- ບັນທຶກເຣື່ອງຣາວຕ່າງໆໄວ້ [ແລະ ສິ່ງສຳຄັນທີ່ສຸດອັນນຶ່ງອີກຄື]

- ແປປຶ້ມຕ່າງໆຂອງໂຮງຮຽນຊັ້ນປະຖົມເປັນພາສາລາວ ສຳລັບລູກສິດ ແລະ ສຳລັບນາຍຄຣູ
- ຂຽນເຣື່ອງຕ່າງໆ ຫລື ເຣື່ອງວິຈານຕ່າງໆ ເປັນພາສາລາວ ເພື່ອໃຫ້ຄົນລາວທັງຫລາຍ ເກີດມີ ຄວາມຄິດອັນດີ ອັນທີ່ຈະນຳເຂົ້າສູ່ຄວາມສາມັກຄີ ແລະ ຄວາມເປັນກ້ອນອັນນຶ່ງອັນດຽວກັນ ແລະ ສິ່ງທີ່ເປັນການຕົໂຕໃຫ້ກາຕອດນັ້ນ ຄວນໂຈະໄວ້ກ່ອນ

ຄວາມຫວັງທາງດ້ານການຂີດຂຽນນີ້ ອາດຈະເປັນຄວາມຫວັງບັ້ນສຸດທ້າຍ ໃນການປົກປ້ອງຮັກສາຄວາມເປັນລາວ (Préserver) ສົມມຸດວ່າມີສິບຄົນອ່ານ ແລະພາຍໃນສິບຄົນນັ້ນໄດ້ມີ ໕ ຄົນໄປເວົ້າສູ່ຫມູ່ຟັງ ອັນຫມາຍຄວາມວ່າ ຄວາມຮູ້ອັນນີ້ໄດ້ຂຍາຍໄປເຖິງ ໑໕ ຄົນນັ້ນເອງ ແລະ ການຖ່າຍທອດຄວາມນຶກຄິດອັນສຳຄັນຕ່າງໆກໍຂຍາຍໄປໄວໄດ້ ຍິ່ງໄປກວ່ານັ້ນ ເຮົາສາມາດສ້າງຈຳນວນຄົນທີ່ປາກພາສາລາວໃຫ້ຫລາຍຂຶ້ນໄດ້ ແລະ ຄວາມເປັນຊາດ ຈິ່ງຈະດຳເນີນຕໍ່ໄປໄດ້

ສິ່ງທີ່ກ່າວມານີ້ຄື ຄວາມສຳຄັນ ອັນຍາວນານ ແຫ່ງ ການສົ່ງເສີມ ການປະດິດຄິດແຕ່ງ ເປັນພາສາລາວ ຊຶ່ງ ສ່ວນມາກ ແມ່ນ ການຂີດຂຽນ ແລະ ການພິມ (ເປັນພາສາລາວ)

ແດ່ ທ່ານຜູ່ສຳຄັນ ນັກຮຽນຮູ້ ຫົວຫນ້າສະມາຄົມຕ່າງໆ ພ້ອມດ້ວຍນັກການເມືອງລາວທັງຫລາຍ ຈົ່ງພຍາຍາມພິຈາຣະນາຊອກຫາຊ່ອງທາງຊ່ວຍກັນ ເພື່ອອະນາຄົດຂອງ ລູກລາວຫລານລາວ ໂດຍທົ່ວໄປ ແລະ ເພື່ອ ຄວາມຫມັ້ນຄົງຂອງຊາດລາວ ຊຶ່ງມີແຕ່ຄົນລາວກັບຄົນໄທຍ໌ເທົ່ານັ້ນ ມີ ປະເທດເປັນຂອງຕົນເອງ ໃນຈຳນວນຄົນລາວຊາວໄທທັງຫລາຍ

ຄຳແພວ ພູເພັຊຣ໌ລິນທອງ

---

໑ ເລຂ [Lekha] ຕົວຫນັງສື ຫລືວ່າ ຫນັງສື

ເມື່ອວັນທີ ໑໖-໐໙-໒໐໐໗ ເດືອນ ກັນຍາ ພ.ສ. ໒໕໕໐ ແຫ່ງເມືອງ ປາຣີສ໌